# ໂຮງຮຽນວັນອາທິດ

**ວັນອາທິດທີ 23 ກໍຣະກະດາ 2017 (07- 23- 2017)**

---

## ເລີ່ມຕົ້ນໃໝ່

ດົນປານໃດແລ້ວ ທີ່ທ່ານດີໃຈຢ່າງແທ້ຈິງກັບສິ່ງເປິະເປື້ອນທີ່ທ່ານເຮັດ?.

**ຈຸດສຳຄັນໃນບົດຮຽນ**: ພວກເຮົາລົ້ມເຫລວ; ອົງພຣະເຢຊູເປັນຜູ້ປ່ວແປງໃໝ່.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ການເຮັດໃຫ້ຫ້ອງຄົວເປື້ອນເປິະແມ່ນເຣື່ອງນຶ່ງ. ການເຮັດໃຫ້ຊີວິດເປື້ອນເປິະກໍແມ່ນອີກເຣື່ອງນຶ່ງ. ຂ້າພະເຈົ້າສາມາດທຳຄວາມສະອາດຫ້ອງຄົວໄດ້ໂດຍທີ່ທ່ານບໍ່ສາມາດຮູ້ໄດ້ວ່າມີຫຍັງເກີດຂຶ້ນກ່ອນນັ້ນ. ແຕ່ເມື່ອຂ້າພະເຈົ້າເຮັດໃຫ້ຊີວິດຂອງຂ້າພະເຈົ້າຜິດພາດ, ຂ້າພະເຈົ້າບໍ່ສາມາດເຊັດຖູຄວາມຜິດພາດອອກໄດ້ ຫຼືປົກປິດຄວາມຜິດພາດໄດ້. ທ່ານເຄີຍພົບຄວາມບົກພ່ອງທີ່ສຸດໃນຕົວທ່ານເອງບໍ່? ອາດຈະເປັນຍ້ອນຄວາມສັມພັນບໍ່ສອດຄ່ອງ, ການຈັດອັນດັບຂອງຊີວິດບໍ່ຖືກ, ຫຼືການຖືກລໍ້ລວງ, ຫຼືນິສັຍທີ່ເບິ່ງເໝືອນວ່າຍຶດເອົາທຸກສິ່ງເຂົ້າມາໃນຊີວິດເທື່ອລະເລັກລະນ້ອຍ ອີກຊົ່ວຂະນະນຶ່ງທ່ານໄດ້ຍືນຢູ່ທີ່ທາງຕັນ. ແຕ່ທ່ານກໍຍັງຍ່າງອີກຕໍ່ໄປໃນເສັ້ນທາງນັ້ນ ສືບຕໍ່ເຮັດຜິດຊ້ຳແລ້ວຊ້ຳອີກ ເພາະທ່ານຄິດວ່າຄວາມເຈັບປວດຈາກການປ່ຽນແປງ ໃຫຍ່ກວ່າຄວາມເຈັບປວດທີ່ເຮັດຜິດຊ້ຳເກົ່າ ຊ້ຳແລ້ວຊ້ຳອີກ? ຫຼືທ່ານໄດ້ສແວງຫາພຣະເຢຊູເພື່ອຊ່ວຍທ່ານຫາທາງອອກຢູ່ບໍ?

ເປໂຕ, ເປັນສາວົກຜູ້ນຶ່ງທີ່ໃກ້ຊິດກັບພຣະເຢຊູ ທີ່ຮູ້ວ່າຄວາມຜິດພາດນັ້ນມີຄວາມໝາຍຢ່າງໃດ. ເພິ່ນໄດ້ເຮັດຜິດພາດທີ່ໃຫຍ່, ແຕ່ເຣື່ອງລາວຂອງເປໂຕໄດ້ຊ່ວຍໜຸນໃຈເຮົາແລະຊີ້ທາງອອກໃຫ້ແກ່ເຮົາ ຈົ່ງເລີ່ມຕົ້ນກັບພຣະເຈົ້າພຣະເຢຊູໃຫ້ໄວເທົ່າໃດຍິ່ງດີ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

**ສຶກສາພຣະຄັມພີ**

**1. ໂຢຮັນ 18:15-18, 25-27**:

*15ຊີໂມນເປໂຕກັບສາວົກອີກຄົນໜຶ່ງໄດ້ຕາມພຣະເຢຊູໄປ ສາວົກຄົນນັ້ນຮູ້ຈັກກັນກັບມະຫາປະໂຣຫິດ ເຂົາໄດ້ເຂົ້າໄປ
ກັບພຣະເຢຊູເຖິງເດີ່ນບ້ານຂອງມະຫາປະໂຣຫິດ. 16ຝ່າຍເປໂຕຢືນຢູ່ຮິມປະຕູຂ້າງນອກ ສາວົກຄົນນັ້ນທີ່ຮູ້ຈັກກັນກັບ
ມະຫາປະໂຣຫິດ ໄດ້ອອກໄປເວົ້າກັບຜູ້ຍິງທີ່ເຝົ້າປະຕູ ແລ້ວກໍພາເປໂຕເຂົ້າໄປ. 17ນັ້ນຍິງໃຊ້ທີ່ເຝົ້າປະຕູໄດ້ຖາມເປໂຕ
ວ່າ, "ໂຕກໍເປັນສາວົກຂອງຄົນນັ້ນເໝືອນກັນຕີ້" ເປໂຕຕອບວ່າ, "ບໍ່ແມ່ນດອກ." 18ພວກຂ້ອຍໃຊ້ກັບພວກຍາມກໍຢືນ
ຢູ່ທີ່ນັ້ນເອົາຖ່ານມາດັງໄຟເພາະວ່າ ອາກາດໜາວຈຶ່ງພາກັນຢືນຜີງໄຟຢູ່ ແລະເປໂຕກໍຢືນຜີງໄຟນຳເຂົາເໝືອນກັນ.
25ຂະນະນັ້ນຊີໂມນເປໂຕກຳລັງຢືນຜີງໄຟຢູ່ ຄົນເຫລົ່ານັ້ນຖາມເປໂຕວ່າ, "ໂຕກໍເປັນສາວົກຂອງຄົນນັ້ນເໝືອນກັນບໍ່
ແມ່ນຫຼື" ເປໂຕຕອບປະຕິເສດວ່າ, "ບໍ່ແມ່ນດອກ." 26ຂ້ອຍໃຊ້ຄົນໜຶ່ງຂອງມະຫາປະໂຣຫິດ ຊຶ່ງເປັນພີ່ນ້ອງກັບຄົນທີ່
ເປໂຕຟັນຫູຂາດນັ້ນ ກໍໄດ້ຖາມວ່າ, "ຂ້ອຍໄດ້ເຫັນເຈົ້າກັບຄົນນັ້ນໃນສວນບໍ່ແມ່ນຫລື." 27ເປໂຕຈຶ່ງຕອບປະຕິເສດອີກ
ແລະທັນໃດນັ້ນໄກ່ກໍຂັນ.*

ເປໂຕຜ່ານຫຼາຍສິ່ງໂດຍສະເພາະໃນຄ່ຳຄືນນັ້ນ: ເຂົ້າແລງຄາບສຸດທ້າຍ, ເຮັດຜິດຕໍ່ພຣະເຢຊູໂດຍການນອນຫລັບໃນສວນເຄັດເຊມາເນ, ຄຳພະຍານຂອງຢູດາຜູ້ທໍຣະຍົດ, ຕໍ່ສູ້ທະຫານເຝົ້າຍາມພຣະວິຫານແລະເຫັນພຣະເຢຊູປ່ອຍໃຫ້ພຣະອົງເອງຖືກຈັບໄປ. ເຫດການສຳຄັນເຫຼົ່ານີ້ບໍ່ໄດ້ເປັນຂໍ້ແກ້ຕົວການປະຕິເສດຂອງເປໂຕ, ແຕ່ສິ່ງເຫຼົ່ານັ້ນໄດ້ຊ່ວຍເຮົາໃຫ້ນຶກຂຶ້ນໄດ້ວ່າແນ່ນອນເພິ່ນຈະເມື່ອຍແລະສັບສົນ ທຸກສິ່ງທຸກຢ່າງໃນຊີວິດຂອງເພິ່ນກັບພິກປີ້ນ. ເຖິງແມ່ນ, ຕອນນັ້ນເຫຼົ່າອັຄສາວົກທັງໝົດແລ່ນປົບໜີຈາກການຖືກຈັບຂອງພຣະເຢຊູ(ມັດທາຍ 26:55), ຢ່າງນ້ອຍເປໂຕຍັງພະຍາຍາມຢູ່ໃກ້ເທົ່າທີ່ຈະໃກ້ໄດ້ ເພື່ອຈະໄດ້ເຫັນແລະໄດ້ຍິນວ່າແມ່ນຫຍັງເກີດຂຶ້ນ.

" ອັຄສາວົກຄົນອື່ນ," ຊຶ່ງເຊື່ອວ່າແມ່ນໂຢຮັນ ທີ່ສາມາດຕິດຕາມພຣະເຢຊູເຂົ້າໄປໃນບໍຣິເວນສະພາສານຊັ້ນສູງ. ເປໂຕຍືນຢູ່ທາງນອກ. ຂ້ອຍໃຊ້ຄົນນຶ່ງທີ່ບໍ່ແມ່ນສະມາຊິກເຝົ້າຍາມພຣະວິຫານ. ເພິ່ນຈຳຕ້ອງອອກມາຢືນຢູ່ຢ່າງດຽວດາຍເໝືອນຄົນເຈັບປວດ. ບໍ່ເປັນໜ້າປລາດໃຈ, ທີ່ປະຊາຊົນເລີ້ມຊັກຖາມເພິ່ນວ່າເປັນຜູ້ຕິດຕາມພຣະຄຣິດແລະນັ້ນກໍເປັນເວລາທີ່ເປໂຕເລີ້ມປະຕິເສດ.

ພຣະທັມລູກາໄດ້ບັນລະຍາຍເພີ້ມເຕີມຫຼັງຈາກໄກ່ຂັນ: "ແລະອົງພຣະຜູ້ເປັນເຈົ້າໄດ້ຊົງຫລຽວເບິ່ງເປໂຕ ແລ້ວເປໂຕກໍລະນຶກເຖິງຄຳທີ່ອົງພຣະຜູ້ເປັນເຈົ້າໄດ້ຊົງກ່າວແກ່ຕົນວ່າ, ວັນນີ້ກ່ອນໄກ່ຂັນທ່ານຈະປະຕິເສດເຮົາເຖິງສາມເທື່ອ. ແລ້ວເປໂຕກໍອອກໄປທາງນອກຮ້ອງໄຫ້ເປັນທຸກໜັກໃຈ".(ລູກາ 22:61-62).

ຫຼາຍຄັ້ງພວກເຮົາມັກເບິ່ງຊາຍແລະຍິງໃນພຣະຄັມພີວ່າ " ຍິ່ງໃຫຍ່ກວ່າຊີວິດ." ການພົບກັບພຣະເຈົ້າຂອງເຂົາເຈົ້າແລະໄຊຊະນະຂອງເຂົາເຈົ້າເບິ່ງຄືວ່າໄກກັນຫລາຍກັບປະສົບການທີ່ພວກເຮົາມີໃນທຸກວັນນີ້. ພວກເຮົາອາດຈະເຫັນຄວາມລົ້ມເຫລວຂອງເຂົາເຈົ້າຫລາຍກວ່າຂອງພວກເຮົາ ແລະມີຄວາມຫາຍຍະນະຫລາຍກວ່າ. ຜົນທີ່ຕາມມາ, ອາດຈະເຮັດໃຫ້ພວກເຮົາຍາກເວົ້າວ່າ: " ເຮົາຈະບໍ່ເຮັດໃຫ້ພຣະເຢຊູຄຣິດຜິດຫວັງແບບນັ້ນ."

ແທ້ຈິງ, ນັ້ນແມ່ນຄຳເວົ້າຂອງເປໂຕໃນຕອນຫົວຄ່ຳຂອງຄືນນັ້ນ. ເມື່ອພຣະເຢຊູຮັບປະທານເຂົ້າຄາບສຸດທ້າຍກັບສາວົກຂອງພຣະອົງ ພຣະອົງໄດ້ທຳນວາຍການທໍຣະຍົດຂອງຢູດາ. ເມື່ອເປໂຕເວົ້າວ່າເພິ່ນຈະສະລະຊີວິດເພື່ອພຣະເຢຊູ, ອົງພຣະຜູ້ເປັນເຈົ້າຊົງຢືນຢັນວ່າເປໂຕຈະປະຕິເສດພຣະອົງ (ໂຢຮັນ 13:37-38 ). ນີ້ບໍ່ແມ່ນເຣື່ອງຄາດເດົາທີ່ເກີດຂຶ້ນກັບເປໂຕ. ເຖິງຢ່າງໃດກໍຕາມ, ເພິ່ນຜູ້ດຽວເທົ່ານັ້ນທີ່ກ້າຍ່າງເທິງໜ້ານ້ຳກັບພຣະເຢຊູ, ແລະເພິ່ນເປັນຜູ້ທຳອິດໃນເຫຼົ່າອັຄສາວົກທີ່ຍອມຮັບພຣະເຢຊູວ່າ, " ທ່ານຄືພຣະຄຣິດ, ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່" (ມັດທາຍ16: 16). ດັ່ງນັ້ນ, ເປໂຕໃຫ້ຄຳຕອບຢ່າງດຽວກັບພວກເຮົາ ແນ່ໃຈທີ່ຈະເວົ້າວ່າ: " ຂ້ານ້ອຍຈະບໍ່ປະຕິເສດພຣະອົງຈັກເທື່ອ !" (ມັດທາຍ 26: 35).

ບາງທີພວກເຮົາກໍບໍ່ແຕກຕ່າງຈາກເປໂຕເທົ່າໃດ. ພວກເຮົາທັງໝົດເຄີຍຢູ່ໃນສະຖານະການທີ່ຢ້ານກົວແລະຍອມຈຳນົນຕໍ່ຄວາມກົດດັນຂອງຝູງຊົນ. ພວກເຮົາອາດຈະບໍ່ປະຕິເສດພຣະເຢຊູຢ່າງຊັດເຈນເໝືອນກັບເປໂຕ. ແຕ່ພວກເຮົາອາດຈະເຄີຍມີໂອກາດຊົ່ວວູບ ທີ່ພະຍາຍາມປົກປິດບໍ່ໃຫ້ຄົນອື່ນຮູ້ວ່າເຮົາມີຄວາມສັມພັນກັບພຣະອົງ.

ພວກເຮົາປະຕິເສດພຣະອົງຜ່ານທາງຄຳເວົ້າແລະການກະທຳຂອງພວກເຮົາ. ແລະເມື່ອເຮົາເລືອກເຮັດບາບ ພວກກໍເຮົາກຳລັງປະຕິເສດອີກ ທີ່ພວກເຮົາເວົ້າວ່າອົງພຣະຜູ້ເປັນເຈົ້າເປັນເຈົ້າຊີວິດຂອງເຮົາ. ເມື່ອໄປຕາມທາງບ່ອນໃດບ່ອນນຶ່ງ, ສຽງໄກ່ຂັນ, ແລະພວກເຮົາກໍເໝືອນກັບຖືກຕີຢ່າງແຮງຈາກການປະຕິເສດພຣະອົງ.

ດົນປານໃດແລ້ວທີ່ສິ່ງນັ້ນເກີດຂຶ້ນກັບທ່ານ___ຖ້າບໍ່, ດົນປານໃດແລ້ວ___ທ່ານໄດ້ເຮັດຫຍັງ? ມີຫຍັງເກີດຂຶ້ນພາຍຫລັງທີ່ທ່ານໄດ້ລົ້ມເຫລວ? ທ່ານໄດ້ຈົດບັນຖຶກກ່ຽວກັບຄວາມລົ້ມເຫລວຂອງຕົວເອງບໍ່? ຫຼືທ່ານພຽງແຕ່ພະຍາຍາມດຳລົງຊີວິດຕໍ່ໄປເໝືອນກັບວ່າບໍ່ມີສິ່ງໃດເກີດຂຶ້ນໃນຊີວິດຂອງທ່ານ? ພວກເຮົາຈະເຫັນຈາກຊີວິດຂອງເປໂຕ ຕໍ່ການເລືອກທີ່ດີກວ່າທີ່ລໍຖ້າເຮົາຢູ່ທາງໜ້າ.

**2. <u>ໂຢຮັນ 21:15-19</u>:**

*15ເມື່ອເຂົາປັ້ນເຂົ້າແລ້ວພຣະເຢຊູຊົງກ່າວກັບຊີໂມນເປໂຕວ່າ,"ຊີໂມນລູກໂຢຮັນເອີຍ, ເຈົ້າຮັກເຮົາຫລາຍກວ່າເຫລົ່າ*
*ນີ້ຫລື" ເປໂຕທູນວ່າ "ໂດຍພຣະອົງເຈົ້າເອີຍ, ພຣະອົງຊົງຊາບວ່າຂ້າພຣະອົງຮັກແພງພຣະອົງ" ພຣະອົງຊົງສັ່ງເປໂຕ*
*ວ່າ, "ຈົ່ງລ້ຽງແກະໜຸ່ມຂອງເຮົາເນີ." 16ພຣະອົງຊົງກ່າວກັບເປໂຕເປັນເທື່ອທີສອງວ່າ, "ຊີໂມນລູກໂຢຮັນເອີຍ, ເຈົ້າຮັກ*
*ເຮົາຫລື" ເປໂຕທູນຕອບວ່າ, "ໂດຍພຣະອົງເຈົ້າເອີຍ, ພຣະອົງຊົງຊາບວ່າຂ້າພຣະອົງຮັກແພງພຣະອົງ" ພຣະອົງຊົງສັ່ງ*
*ທ່ານວ່າ, "ຈົ່ງລ້ຽງຮັກສາແກະຂອງເຮົາເນີ." 17ພຣະອົງຊົງກ່າວກັບເປໂຕເປັນເທື່ອທີສາມວ່າ, "ຊີໂມນລູກໂຢຮັນເອີຍ,*
*ເຈົ້າຮັກແພງເຮົາຫລື" ເປໂຕກໍເປັນທຸກໃຈທີ່ພຣະອົງຊົງຖາມທ່ານເທື່ອທີສາມວ່າ, "ເຈົ້າຮັກແພງເຮົາຫລື" ເປໂຕຈິ່ງທູນ*
*ຕອບວ່າ, "ພຣະອົງເຈົ້າເອີຍ, ພຣະອົງຊົງຊາບທຸກສິ່ງ ພຣະອົງຊົງຊາບວ່າຂ້າພຣະອົງຮັກແພງພຣະອົງ" ພຣະເຢຊູຊົງ*
*ສັ່ງທ່ານວ່າ, "ຈົ່ງລ້ຽງແກະຂອງເຮົາເນີ. 18ເຮົາບອກແກ່ເຈົ້າຕາມຄວາມຈິງວ່າ ເມື່ອເຈົ້າຍັງໜຸ່ມເຈົ້າເຄີຍຄາດແອວຂອງ*
*ເຈົ້າເອງ ແລະທ່ຽວໄປມາໃສໄດ້ຕາມໃຈເຈົ້າມັກ ແຕ່ເມື່ອເຈົ້າເຖົ້າແລ້ວ, ເຈົ້າຈະຢຽດມືຂອງເຈົ້າອອກ ແລະຄົນອື່ນຈະ*
*ຄາດແອວໃຫ້ແລະພາໄປບ່ອນເຈົ້າບໍ່ຢາກໄປ." 19(ທີ່ພຣະອົງຊົງກ່າວດັ່ງນີ້ກໍໝາຍຄວາມວ່າ ເປໂຕຈະຖວາຍກຽດຕິຍົດ*
*ແດ່ພຣະເຈົ້າດ້ວຍການຕາຍຢ່າງໃດ) ຄັນພຣະອົງຊົງກ່າວດັ່ງນີ້ແລ້ວຈຶ່ງຊົງສັ່ງເປໂຕວ່າ, "ເຈົ້າຈົ່ງຕາມເຮົາມາ."*

ມີຫຍັງເກີດຂຶ້ນໃນທັນທີຈາກປໂຍກນີ້ທີ່ພຣະເຢຊູໄດ້ຖາມເປໂຕເຖິງສາມຄັ້ງໃນຄຳຖາມອັນດຽວກັນ. ສາມເທື່ອນັ້ນແມ່ນຈຳນວນຄຳຖາມທີ່ຕົງກັບຈຳນວນທີ່ເປໂຕປະຕິເສດພຣະເຢຊູໃນຄືນທີ່ພຣະອົງຖືກຈັບ ເປັນຊ່ວງເວລາທີ່ເປໂຕຄວນສະແດງຄວາມຈິງຮັກພັກດີຂອງລາວຕໍ່ພຣະເຢຊູຢ່າງດີທີ່ສຸດ.

ສິ່ງທີ່ເຫັນໄດ້ຊັດແຈ້ງແມ່ນຄຳວ່າ " ຄວາມຮັກ" ເປັນຄຳເວົ້າທີ່ເປັນກຸນແຈໄຂໃນຂໍ້ 15-19. ໜ້າເສັຽດາຍ, ຜົນກະທົບເລິກໆຂອງຖ້ອຍຄຳນີ້ແມ່ນການຄົບເຕັມຕໍ່ຜູ້ອ່ານໃນສມັຍປັດຈຸບັນ ເພາະພາສາອັງກິດມີພຽງຄຳເວົ້າດຽວສຳລັບຄຳວ່າ "ຄວາມຮັກ." ດັ່ງນັ້ນ, ຈຶ່ງເໝືອນກັບວ່າພຣະເຢຊູໄດ້ຖາມເປໂຕຄຳຖາມເກົ່າເຖິງສາມຄັ້ງ. ເຖິງຢ່າງໃດກໍຕາມ, ຖ້າພວກເຮົາເບິ່ງໃນພາສາກຣີກ, ຈະມີຫຼາຍຄຳສຳລັບ "ຄວາມຮັກ", ທີ່ພວກເຮົາຄົ້ນພົບແລະຕອບສນອງໄດ້.

ຄວາມຈິງໃນສອງຄຳຖາມແລກ, ພຣະເຢຊູໃຊ້ຄຳວ່າ **ອາກາເປ** ຄວາມຮັກທີ່ບໍ່ມີເງື່ອນໄຂ, ເປັນຄວາມຮັກທີ່ເມດຕາ ເຊັ່ນດຽວກັບຄວາມຮັກທີ່ພຣະເຈົ້າໃຫ້ແກ່ພຣະເຢຊູ ແລະຄວາມຮັກຢ່າງດຽວກັນນັ້ນແຫຼະທີ່ພຣະເຢຊູໃຫ້ແກ່ພວກເຮົາ. ໜ້າສົນໃຈ, ເປໂຕບໍ່ໄດ້ຕອບຄືນດ້ວຍຄຳວ່າຮັກທີ່ເໝືອນກັນ, ເປໂຕໃຊ້ຄຳວ່າ ຟີລີໂອ, ຊຶ່ງອ້າງເຖິງຄວາມຮັກແບບອ້າຍນ້ອງ, ຄວາມຮັກແບບສ່ວນຕົວບຸກຄົນ. ການຕອບເທື່ອທີສອງກໍແມ່ນຕາມຮູບແບບເດີມ. ພຣະເຢຊູຖາມວ່າ, "ຊີໂມນລູກໂຢຮັນເອີຍ, ເຈົ້າອາກາເປເຮົາຫລື?" ແຕ່ເປໂຕຕອບ, " ພຣະອົງຊົງຊາບວ່າຂ້ານ້ອຍຟີລີໂອພຣະອົງ." ການຕອບເທື່ອທີສາມ, ເຖິງຢ່າງໃດກໍຕາມ, ພຣະເຢຊູໄດ້ປ່ຽນມາໃຊ້ຄຳວ່າຟີລີໂອ, ທີ່ມີຄວາມໝາຍດຽວກັນກັບຄຳວ່າຄວາມຮັກທີ່ເປໂຕໃຊ້, ຊຶ່ງມີຄວາມໝາຍວ່າເປໂຕສາມາດຕອບໄດ້ແບບດຽວທີ່ນັ້ນ.

ດ້ວຍເຫດໃດເປໂຕຈຶ່ງບໍ່ສະທ້ອນຄວາມຮັກຕາມແບບຂອງພຣະເຢຊູ? ບາງທີເປໂຕມີຄວາມຮູ້ສຶກຜິດຈາກການປະຕິເສດຂອງເພິ່ນແລະຮູ້ສຶກວ່າບໍ່ມີຄ່າພໍທີ່ຈະກ່າວຄຳວ່າຮັກ, ນັບຕັ້ງແຕ່ເພິ່ນບໍ່ຍອມຮັບໃນຄືນທີ່ເພິ່ນໄດ້ປະຕິເສດພຣະເຢຊູ. ຫຼືບາງທີ່ເປໂຕຕັ້ງໃຈໃຊ້ຮູບແບບຄວາມຮັກ, ຟີລີໂອ, ເພາະເພິ່ນຕ້ອງການທີ່ຈະສະແດງອອກໃຫ້ພຣະເຢຊູເຫັນວ່າເພິ່ນສຳນຶກຜິດຢ່າງແທ້ຈິງ.

ອີກປະເດັນນຶ່ງ, ແມ່ນຫຍັງສຳຄັນທີ່ສຸດທຸກຄັ້ງທີ່ພຣະເຢຊູຖາມ, ພຣະອົງໄດ້ເພີ້ມວຽກງານຮັບໃຊ້ນຳທີ່ວ່າ:"ຈົ່ງລ້ຽງແກະໜຸ່ມຂອງເຮົາເນີ." "ຈົ່ງລ້ຽງຮັກສາແກະຂອງເຮົາເນີ." "ຈົ່ງລ້ຽງລູກແກະຂອງເຮົາ." ເປໂຕ, ແຕ່ການກະທຳທີ່ຜ່ານມາໄດ້ຖືກໃຫ້ອະພັຍ, ແລະພຣະເຢຊູປາຖນາໃຫ້ເປໂຕເດີນໜ້າໄປສູ່ວຽກງານພັນທະກິດ.

ສິ່ງທີ່ສວຍງາມກ່ຽວກັບພຣະເຈົ້າແມ່ນພຣະອົງບໍ່ພຽງແຕ່ໃຫ້ອະພັຍເທົ່ານັ້ນ ແຕ່ພຣະອົງຢາກປົວແປງ, ໄຖ່, ແລະ

ຟື້ນຟູອະດີດເຮົາໃໝ່ ພ້ອມທັງຄວາມເຈັບປວດ ແລະຄວາມລົ້ມເຫລວຂອງເຮົາ.  ພຣະອົງເອົາສ່ວນທີ່ລົ້ມເຫລວໃນຊີວິດເຮົາແລະສ້າງເຮົາໃຫ້ສົມບູນແບບ.

- ການແຕ່ງງານທີ່ເບິ່ງຄືວ່າມາເຖິງຈຸດທີ່ບໍ່ສາມາດປົວແປງໄດ້ ກໍສາມາດປົວແປງໄດ້ແລະທັງສອງສາມາດມີປະສົບການກັບຄວາມຮັກອັນເລິກເຊິ່ງກວ່າແຕ່ກ່ອນ.
- ຫົວໃຈແຕກສລາຍທີ່ເກີດຈາກການຢ່າຮ້າງສາມາດປົວແປງໃໝ່ໄດ້ ໂດຍຜ່ານພຣະເມດຕາແລະຄວາມສັດຊື່ຂອງພຣະເຈົ້າ.
- ຄົນທີ່ຕົກຕ່ຳເພາະຕິດຢາເສດຕິດສາມາດປົວແປງໃໝ່ໄດ້ແລະເດີນໜ້າດ້ວຍການດຳເນີນຊີວິດທີ່ເກີດຜົນ, ດຳເນີນຊີວິດດ້ວຍການຖວາຍກຽດແດ່ພຣະຄຣິດ.

ຂ້າພະເຈົ້າມັກຖ້ອຍຄຳທີ່ອັຄສາວົກໂປໂລໄດ້ບັນລະຍາຍໄວ້ວ່າ:  "ພຣະອົງຜູ້ຊົງເລົ້າໂລມໃຈເຮົາໃນການທຸກລຳບາກທຸກຢ່າງຂອງເຮົາ ເພື່ອເຮົາຈະສາມາດໄດ້ເລົ້າໂລມໃຈຄົນເຫລົ່ານັ້ນທີ່ມີຄວາມທຸກລຳບາກຢ່າງໃດຢ່າງໜຶ່ງດ້ວຍຄວາມເລົ້າໂລມໃຈທີ່ເຮົາເອງໄດ້ຮັບມາຈາກພຣະເຈົ້າ" ( 2 ໂກຣິນໂທ 1:4).

ເຖິງຢ່າງໃດກໍຕາມຄວາມບາບແລະຄວາມລົ້ມເຫລວຂອງເຮົາທີ່ຜ່ານມາ ເຖິງແມ່ນວ່າເຮົາອາດຈະປະຕິເສດພຣະຄຣິດ  ພຣະອົງກໍຊົງໃຫ້ອະພັຍເຮົາ. ພຣະອົງປົວແປງເຮົາໃໝ່. ແລະພຣະອົງຍັງເລືອກທີ່ທຳງານຜ່ານເຮົາເພື່ອພຣະສະງ່າຣາສີຂອງພຣະອົງ.

## ນຳໃຊ້ໃນຊີວິດ

**ພວກເຮົາທັງໝົດໄດ້ລົ້ມເຫລວໃນຖານະເປັນຜູ້ຕິດຕາມພຣະຄຣິດ, ແຕ່ພຣະອົງຊົງສ້າງເຮົາຂຶ້ນໃໝ່. ຈົ່ງພິຈາຣະນາເບິ່ງຄຳແນະນຳດັ່ງລຸ່ມນີ້.**

- **ຈົ່ງຈົດຈຳ.** ເບິ່ງກັບຄືນຫລັງໃນຊ່ວງເວລາທີ່ທ່ານຢູ່ໃນຄວາມບາບ. ຂອບຄຸນພຣະເຈົ້າທີ່ພຣະອົງໃຫ້ອະພັຍແລະພິຈາຣະນາເບິ່ງທາງທີ່ພຣະອົງນຳເອົາການປົວແປງມາສູ່ຊີວິດຂອງທ່ານ.

- **ທ່ອງຈຳ.** ທ່ອງຈຳພຣະທັມເພງສັຣເສີນ 139: 23-24. ອະທິຖານເປັນປະຈຳສັ້ນໆເພື່ອບໍ່ໃຫ້ບົກພ່ອງລະຫວ່າງຕົວທ່ານແລະພຣະເຈົ້າ. ແລະເມື່ອມີເຫດການຫຼືຄວາມບາບເຂົ້າມາໃນຊີວິດຂອງທ່ານ ທ່ານຈະໄດ້ອ້ອນວອນຂໍການໃຫ້ອະພັຍຈາກພຣະອົງ.

- **ຂຽນ.**  ຂຽນຈົດໝາຍໃຫ້ອະພັຍເຖິງບຸກຄົນທີ່ເຮັດໃຫ້ທ່ານເຈັບ. ບໍ່ວ່າທ່ານຈະເອົາຈົດໝາຍນັ້ນໃຫ້ກັບຄົນນັ້ນຫຼືບໍ່, ການຂຽນສາມາດຊ່ວຍທ່ານສະແດງອອກເຖິງການໃຫ້ອະພັຍແລະຍົກໂທດໃຫ້ກັບຄົນນັ້ນດັ່ງທີ່ພຣະເຢຊູຊົງໃຫ້ອະພັຍແກ່ທ່ານ.

ແມ່ນແລ້ວ, ທ່ານເຮັດໃຫ້ເປື້ອນເປິະ. ແຕ່ພຣະຄຸນຂອງພຣະເຈົ້າໃຫຍ່ຫລວງແລະຄວາມຮັກຂອງພຣະອົງກກວ້າງໃຫຍ່ ພຣະອົງຈະສ້າງທ່ານຂຶ້ນໃໝ່ເມື່ອທ່ານມາຫາພຣະອົງດ້ວຍການກັບໃຈໃໝ່.  ບາບຂອງທ່ານ ການປະຕິເສດພຣະເຢຊູຍັງບໍ່ໄດ້ເຖິງທາງຕັນເທື່ອ. ພຣະຄຣິດໃຫ້ໂອກາດທ່ານເພື່ອເລີ້ມຕົ້ນໃໝ່ອີກ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**